

ໃຫ້ທຶນໂດຍ
ສະຫະພາບ ເອີຣົບ

care

Lao Journalists Association

ການນຳໃຊ້ AI ເຂົ້າຊ່ວຍ ໃນການຜະລິດຂ່າວ

ນຳສະເໜີໂດຍ: ທອງສິງ ສີວົງໄຊ
ຈາກພາກວິຊາ ວິທະຍາສາດຄອມພິວເຕີ,
ຄະນະວິທະຍາສາດທຳມະຊາດ,
ມະຫາວິທະຍາໄລແຫ່ງຊາດ

ຫົວຂໍ້:



ພາກທີ 1: ພາກສະເໜີ

ພາກທີ 2: Prompt Engineering ສຳລັບງານຂ່າວ

ພາກທີ 3: ການສ້າງຮູບພາບປະກອບຂ່າວດ້ວຍ AI

ພາກທີ 4: ຈາກສຽງເປັນຂໍ້ຄວາມ ແລະ ຂໍ້ຄວາມເປັນສຽງ

ພາກທີ 5: ການໂຄລນສຽງ (Voice Cloning)

ພາກທີ 6: ສ້າງ AI ຜູ້ອ່ານຂ່າວແທນ (AI Avatar)


AI
Machine Learning (ML)
Deep Learning
Generative AI

Generative Artificial Intelligence (AI) ແມ່ນຫຍັງ? ແລະ ມັນເຮັດວຽກແນວໃດ? ມີປະໂຫຍດແນວໃດ?

Generative AI ເປັນຕົວຈັດລຽງຄວາມສຳຄັນທີ່ສາມາດສ້າງເນື້ອໃນໃໝ່ເຊັ່ນ: ໂຕໜັງສື, ຮູບພາບ, ວີດີໂອ, ເພງ ແລະ ອື່ນໆ, ໂດຍອາໄສຂໍ້ມູນທີ່ໄດ້ຮັບ ການຝຶກຝົນມາແລ້ວ. ລະບົບ AI ດັ່ງກ່າວສາມາດນຳໃຊ້ເຕັກນິກການຮຽນຮູ້ແບບເລິກເຊິ່ງ, ໂດຍສະເພາະແມ່ນ ການນຳໃຊ້ລະບົບເຄືອຂ່າຍສະໝອງຂອງເຄື່ອງຈັກ, ເພື່ອໃຫ້ເຂົ້າໃຈຮູບແບບ ແລະ ສ້າງ ຜົນໄດ້ຮັບໃໝ່ອອກມາ.

AI ຮອງຮັບພາສາລາວໄດ້ດີສໍ່າໃດ?

Claude AI = ພາສາລາວໃນລະດັບດີຫຼາຍ. (https://claude.ai/)
DeepSeek = ພາສາລາວໃນລະດັບດີ. (https://www.deepseek.com/)
Gemini = ພາສາລາວລະດັບປານກາງ. (https://gemini.google.com/)
ChatGPT = ພາລາລາວໃນລະດັບຕ້ອງໄດ້ປັບປຸງ. (https://chatgpt.com/)

Generative AI ຈະມາຊ່ວຍນັກຂ່າວພວກເຮົາໄດ້ແນວໃດແດ່?

ການຂຽນຂ່າວ/ ການຜະລິດເນື້ອໃນຂ່າວ News / Content:
ຊ່ວຍໃນການຂຽນຂ່າວ, ການສ້າງເນື້ອໃນໃໝ່ທີ່ສາມາດສ້າງຂຶ້ນໄດ້ໂດຍAI ເພື່ອສຶກສາ ແລະ ສ້າງຜົນງານໄດ້ທັນເວລາ ແລະ ໃນຫຼາຍຫົວຂໍ້.

ການວິເຄາະຂໍ້ມູນ Data Analysis:
ຄົ້ນຫາຂໍ້ມູນເພື່ອນຳມາວິເຄາະຂໍ້ມູນທີ່ມີຈຳນວນຫຼາຍ ເພື່ອໃຫ້ຮູ້ຜົນໄດ້ຮັບ ແລະ ທ່າອ່ຽງ.

ການມີສ່ວນຮ່ວມ Audience Engagement:
ໃຫ້ຄຳແນະນຳການປັບແປງເນື້ອໃນໃຫ້ເຂົ້າກັບຜູ້ອ່ານ ໂດຍອາໄສລັກສະນະສະເພາະ ແລະ ພຶດຕິກຳຂອງຜູ້ທີ່ມາອ່ານ.

ພາກທີ 1:
Prompt Engineering ສຳລັບວຽກງານຂ່າວ

Prompt ແມ່ນຫຍັງ?

ການນຳໃຊ້ **Prompt (ຄຳສັ່ງ ຫຼື ຂໍ້ຄວາມທີ່ປ້ອນໃຫ້ AI)** ເພື່ອຄົ້ນຫາ ຂໍ້ມູນ ໃຫ້ໄດ້**ປະສິດທິພາບສູງສຸດ**, ໄດ້ຂໍ້ມູນທີ່**ຊັດເຈນ,** ແລະ **ປະຢັດເວລາ** ນັ້ນ ມີເຕັກນິກ ແລະ ໂຄງສ້າງທີ່ສຳຄັນທີ່ທ່ານສາມາດນຳໃຊ້ໄດ້ດັ່ງນີ້:

1. ໂຄງສ້າງຂອງ Prompt ທີ່ດີ (ຕັ້ງຄຳຖາມແນວໃດໃຫ້ໄດ້ຜົນ)

Prompt ທີ່ມີປະສິດທິພາບຄວນມີອົງປະກອບເຫຼົ່ານີ້ (ບໍ່ຈຳເປັນຕ້ອງມີຄົບທຸກຂໍ້, ແຕ່ຍິ່ງຄົບ ຍິ່ງຊັດເຈນ):

ບົດບາດ (Role): ກຳນົດໃຫ້ AI ເປັນໃຜ (ເຊັ່ນ: ນັກວິໄຈ, ຊ່ຽວຊານດ້ານ IT, ຄູສອນ).

ເປົ້າໝາຍ/ວັດຖຸປະສົງ (Goal/Task): ບອກໃຫ້ຊັດເຈນວ່າຕ້ອງການໃຫ້ເຮັດຫຍັງ.

ບໍລິບົດ (Context): ໃຫ້ຂໍ້ມູນເພີ່ມເຕີມ ຫຼື ຂອບເຂດຂອງຂໍ້ມູນທີ່ຕ້ອງການ.

ຮູບແບບຜົນຮັບ (Format): ຕ້ອງການໃຫ້ສະແດງຜົນແນວໃດ (ເຊັ່ນ: ສະຫຼຸບເປັນຂໍ້ໆ, ເປັນຕາຕະລາງ, ຂໍ້ຄວາມສັ້ນ).

2. ເຕັກນິກການຂຽນ Prompt ເພື່ອຄົ້ນຫາຂໍ້ມູນ

- **ໂໝດສະຫຼຸບ ແລະ ວິເຄາະຂໍ້ມູນ (Summarization & Analysis)**

ຫາກທ່ານມີບົດຄວາມ ຫຼື ງານວິໄຈຂະໜາດໃຫຍ່ ແລະ ຕ້ອງການຈຸດສຳຄັນ:

ຕົວຢ່າງ Prompt: *"ຈົ່ງສະຫຼຸບຈຸດສຳຄັນ ແລະ ຜົນການວິໄຈຈາກບົດຄວາມນີ້ [ວາງລິ້ງ ຫຼື ວາງ ຂໍ້ຄວາມ] ໂດຍແຍກອອກເປັນ 5 ຂໍ້ສັ້ນໆ ທີ່ເຂົ້າໃຈງ່າຍ.“*

- **ໂໝດປຽບທຽບຂໍ້ມູນ (Comparison)**

ເພື່ອເບິ່ງຄວາມແຕກຕ່າງລະຫວ່າງສອງສິ່ງ ຫຼື ຫຼາຍສິ່ງ:

ຕົວຢ່າງ Prompt: *"ຈົ່ງປຽບທຽບຄວາມແຕກຕ່າງລະຫວ່າງ Algorithm A ແລະ Algorithm B ໃນແງ່ຂອງຄວາມໄວ (Speed) ແລະ ຄວາມແມ່ນຍຳ (Accuracy) ໂດຍສະແດງ ຜົນໃນຮູບແບບ **ຕາຕະລາງ**."*

ໂໝດເຈາະເລິກ ຫຼື ອະທິບາຍແນວຄິດ (Explanation)

ເມື່ອຕ້ອງການຮຽນຮູ້ເລື່ອງໃໝ່ໆ ຫຼື ເລື່ອງທີ່ຊັບຊ້ອນ:

ຕົວຢ່າງ Prompt: *"ອະທິບາຍຫຼັກການເຮັດວຽກຂອງ [ຊື່ຫົວຂໍ້/ເຕັກໂນໂລຊີ] ໃຫ້ເຂົ້າໃຈງ່າຍ ສຳລັບຜູ້ເລີ່ມຕົ້ນ ພ້ອມຍົກຕົວຢ່າງການນຳໃຊ້ໃນຊີວິດຈິງ 1-2 ຕົວຢ່າງ."*

ໂໝດລະບຸຂອບເຂດ ແລະ ສິ່ງທີ່ບໍ່ຕ້ອງການ (Negative Prompting)

ເພື່ອປ້ອງກັນບໍ່ໃຫ້ AI ອອກນອກເລື່ອງ:

ຕົວຢ່າງ Prompt: *"ຂໍຂໍ້ມູນກ່ຽວກັບທ່າອ່ຽງຂອງ AI ໃນປີ 2026 ແຕ່ **ບໍ່ຕ້ອງ** ເອົາຂໍ້ມູນທີ່ກ່ຽວກັບລົດຍົນຂັບເຄື່ອນອັດຕະໂນມັດ (Autonomous Vehicles)."*

3. ຫຼັກການຂຽນ Prompt ໃຫ້ໄດ້ຂໍ້ມູນທີ່ຖືກຕ້ອງ ແລະ ເໝາະກັບງານຂ່າວ

ການລົມກັບ AI ບໍ່ຄືກັບການຄົ້ນຫາໃນ Google. ຖ້າເຮົາປ້ອນ **ຄຳສັ່ງສັ້ນເກີນໄປ AI ຈະ "ເດົາ"** ແລະ ອາດຈະ**ສ້າງຂໍ້ມູນປອມ**ຂຶ້ນມາໄດ້.

ຫຼັກການທີ່ດີທີ່ສຸດສຳລັບນັກຂ່າວຄືການໃຊ້ສູດ **R-C-T-O (Role, Context, Task, Output)**.

ເຮົາສາມາດສ້າງ Prompt ທີ່ມີປະສິດທິພາບສູງໄດ້ຕາມຂັ້ນຕອນນີ້:

4. ຫຼັກການຂຽນ Prompt ໃຫ້ໄດ້ຂໍ້ມູນທີ່ຖືກຕ້ອງ ແລະ ເໝາະກັບງານຂ່າວ

ເຮົາສາມາດສ້າງ Prompt ທີ່ມີປະສິດທິພາບສູງໄດ້ຕາມຂັ້ນຕອນນີ້:

1.Role (ກຳນົດບົດບາດ): ຂັ້ນຕອນທີ 1.ບອກ AI ວ່າໃຫ້ມັນຮັບບົດເປັນໃຜ ເພື່ອປັບລະດັບພາສາ ແລະ ມຸມມອງ.

ຕົວຢ່າງ: **"ເຈົ້າຄືບັນນາທິການຂ່າວທີ່ມີປະສົບການສູງ ມັກການຂຽນຂ່າວທີ່ກະຊັບ ແລະ ເຂົ້າໃຈງ່າຍ..."**

2.Context (ໃຫ້ບໍລິບົດ ຫຼື ຂໍ້ມູນພື້ນຖານ): ຂັ້ນຕອນທີ 2.ໃສ່ຂໍ້ມູນ, ເອກະສານອ້າງອີງ, ຫຼື ຄວາມຈິງທີ່ເຮົາມີ ເພື່ອບີບໃຫ້ AI ຕອບສະເພາະໃນຂອບເຂດຂໍ້ມູນນັ້ນ (ຫຼຸດການເດົາຂອງ AI).

ຕົວຢ່າງ: **"ນີ້ຄືບົດຖະແຫຼງການຈາກກະຊວງ..." (ແລ້ວວາງເນື້ອໃນລົງໄປ)**

4. ຫຼັກການຂຽນ Prompt ໃຫ້ໄດ້ຂໍ້ມູນທີ່ຖືກຕ້ອງ ແລະ ເໝາະກັບງານຂ່າວ (ຕໍ່)

3.Task (ສັ່ງງານໃຫ້ຊັດເຈນ): ຂັ້ນຕອນທີ 3.ບອກສິ່ງທີ່ຕ້ອງການໃຫ້ AI ເຮັດໃຫ້ຈະແຈ້ງ ໂດຍໃຊ້ຄຳກິລິຍາທີ່ຊັດເຈນ.

ຕົວຢ່າງ: **"ຈົ່ງສະຫຼຸບປະເດັນສຳຄັນ", "ຈົ່ງຊອກຫາ 3 ປະເດັນທີ່ກະທົບຕໍ່ປະຊາຊົນ"**

4.Output (ກຳນົດຮູບແບບຜົນຮັບ): ຂັ້ນຕອນທີ 4.ລະບຸວ່າຢາກໃຫ້ AI ສະແດງຜົນອອກມາແບບໃດ ເພື່ອໃຫ້ງ່າຍຕໍ່ການນຳໄປໃຊ້ວຽກຕໍ່.

ຕົວຢ່າງ: **"ສະຫຼຸບເປັນຂໍ້ໆ (Bullet points)", "ຂຽນເປັນຕາຕະລາງ", "ຄວາມຍາວບໍ່ເກີນ 200 ຄຳ"**

ຕົວຢ່າງ Prompt (Templates) ສຳລັບການຊອກຫາແນວຄວາມຄິດ ແລະ ສະຫຼຸບຂ່າວ

ເຈົ້າຄືບັນນາທິການຂ່າວ ທີ່ມັກຊອກຫາມຸມມອງຂ່າວທີ່ແຕກຕ່າງ ແລະ ມີຜົນກະທົບຕໍ່ສັງຄົມ.

ຕອນນີ້ຂ້ອຍກຳລັງຈະເຮັດຂ່າວທົ່ວໄປກ່ຽວກັບ: [ໃສ່ຫົວຂໍ້ຂ່າວ ເຊັ່ນ: ການເພີ່ມຂຶ້ນຂອງລົດໄຟຟ້າ (EV) ໃນລາວ]

ຈົ່ງແນະນຳ 5 ມຸມມອງ (Angles) ໃນການສະເໜີຂ່າວນີ້ ໃຫ້ມີຄວາມໜ້າສົນໃຈ ໂດຍແບ່ງເປັນ:

1. ມຸມມອງດ້ານເສດຖະກິດ (ຜູ້ບໍລິໂພກ/ຜູ້ປະກອບການ)
2. ມຸມມອງດ້ານສິ່ງແວດລ້ອມ ແລະ ພະລັງງານ
3. ມຸມມອງດ້ານບັນຫາ ຫຼື ສິ່ງທ້າທາຍ (ເຊັ່ນ: ສະຖານີສາກ, ພາສີ, ການສ້ອມແປງ)
4. ມຸມມອງດ້ານຊີວິດການເປັນຢູ່ຂອງຄົນທົ່ວໄປ
5. ມຸມມອງສຳລັບເຮັດເປັນບົດຄວາມເຈາະເລິກ (Investigative)

ແຕ່ລະຂໍ້ ໃຫ້ບອກ "ແຫຼ່ງຂໍ້ມູນ ຫຼື ບຸກຄົນທີ່ຄວນໄປສຳພາດ" ມາພ້ອມ.

ຜົມໄດ້ຮັບ:

ນີ້ຄື 5 ມຸມມອງ (Angles) ທີ່ທ່ານສາມາດນຳໄປໃຊ້ເພື່ອໃຫ້ຂ່າວມີຄວາມເລິກເຊິ່ງ, ມີມິຕິ ແລະ ໜ້າສົນໃຈຫຼາຍຂຶ້ນ:

1. ມຸມມອງດ້ານເສດຖະກິດ (ຄຸ້ມຄ່າແທ້ ຫຼື ບໍ່?)

ຈຸດເນັ້ນ: ປຽບທຽບຄວາມຄຸ້ມຄ່າລະຫວ່າງຄ່ານ້ຳມັນ ແລະ ຄ່າໄຟຟ້າ ໃນສະພາບເສດຖະກິດປັດຈຸບັນ ໂດຍເບິ່ງທັງມຸມຂອງຜູ້ໃຊ້ທົ່ວໄປ ແລະ ຜູ້ປະກອບການທີ່ປ່ຽນມາໃຊ້ EV ເພື່ອຫຼຸດຕົ້ນທຶນ.

- **ປະເດັນຫຼັກ:** ການປະຢັດຄ່າໃຊ້ຈ່າຍໃນໄລຍະຍາວ ປຽບທຽບກັບລາຄາລົດທີ່ຍັງຂ້ອນຂ້າງສູງ ແລະ ບັນຫາເງິນເຟີ້/ອັດຕາແລກປ່ຽນທີ່ມີຜົນຕໍ່ການນຳເຂົ້າ.
- **ແຫຼ່ງຂໍ້ມູນ / ບຸກຄົນທີ່ຄວນສຳພາດ:**
  - **ຜູ້ບໍລິໂພກ:** ເຈົ້າຂອງລົດ EV ທີ່ໃຊ້ງານຕົວຈິງ (ຖາມເລື່ອງຄ່າໄຟຟ້າທີ່ຫຼຸດລົງ ເມື່ອທຽບກັບຄ່ານ້ຳມັນເມື່ອກ່ອນ).
  - **ຜູ້ປະກອບການ:** ເຈົ້າຂອງທຸລະກິດຂົນສົ່ງ, ບໍລິສັດລົດເຊົ່າ ຫຼື ບໍລິສັດແກ້ກຊີ (ເຊັ່ນ: LOCA) ທີ່ປ່ຽນມາໃຊ້ EV ວ່າຊ່ວຍຫຼຸດຕົ້ນທຶນທຸລະກິດໄດ້ຈັກເປີເຊັ້ນ.

ຕົວຢ່າງ Prompt (Templates) ສຳລັບການຊອກຫາໄອເດຍ ແລະ ສະຫຼຸບຂ່າວ

ເຈົ້າຄືຜູ້ຊ່ຽວຊານດ້ານ Digital Marketing ແລະ Content Creator ຂອງສຳນັກຂ່າວອອນລາຍ.
ນີ້ຄືເນື້ອໃນຂ່າວທີ່ຂ້ອຍຂຽນ:

(ວາງເນື້ອໃນຂ່າວສັ້ນໆ ຂອງເຮົາລົງໄປ) **ຫົວຂໍ້ຂ່າວ**

ຈົ່ງຊ່ວຍຄິດຫົວຂໍ້ຂ່າວ (Headline) ສັ້ນໆ, ດຶງດູດຄວາມສົນໃຈ ແລະ ກະຕຸ້ນໃຫ້ຄົນຢາກກົດອ່ານ ໂດຍຂໍ 5 ຮູບແບບທີ່ແຕກຕ່າງກັນ:

1. ແບບເນັ້ນຕົວເລກ ຫຼື ສະຖິຕິທີ່ໜ້າຕົກໃຈ
2. ແບບຕັ້ງຄຳຖາມໃຫ້ຄົນສົງໄສ
3. ແບບດ່ວນ/ທັນເຫດການ (Breaking News style)
4. ແບບເນັ້ນຜົນກະທົບໂດຍກົງຕໍ່ຜູ້ອ່ານ
5. ແບບສັ້ນກະທັດຮັດ (ບໍ່ເກີນ 15 ຄຳ ສຳລັບລົງ TikTok)

ຜົມໄດ້ຮັບ:

1. ແບບເນັ້ນຕົວເລກ ຫຼື ສະຖິຕິທີ່ໜ້າຕົກໃຈ (Data-Driven)

"ພຸ່ງທະລຸເພດ! ເປີດຕົວເລກຍອດນຳໃຊ້ລົດ EV ໃນລາວປີນີ້ ໂຕກວ່າ X ເທົ່າ ເພາະຄົນສູ້ຄ່ານ້ຳມັນບໍ່ໄຫວ!"

- (ແນວຄິດ: ໃຊ້ຄຳວ່າ "ພຸ່ງທະລຸເພດ" ແລະ "X ເທົ່າ" ເພື່ອດຶງດູດສາຍຕາ ບວກກັບການຈີ້ຈຸດເຈັບ *(Pain point)* ເລື່ອງຄ່ານ້ຳມັນ)

2. ແບບຕັ້ງຄຳຖາມໃຫ້ຄົນສົງໄສ (Curiosity Gap)

"ຊື້ມາກຸ້ມແທ້ບໍ່? ເປີດຄ່າໃຊ້ຈ່າຍຈິງ 'ລົດ EV vs ລົດນ້ຳມັນ' ໃນລາວ ທີ່ຫຼາຍຄົນຍັງບໍ່ທັນຮູ້!"

- (ແນວຄິດ: ສ້າງຄວາມຢາກຮູ້ຢາກເຫັນ ໂດຍການເອົາສິ່ງທີ່ຄົນກຳລັງລັງເລໃຈມາຕັ້ງຄຳຖາມ)

3. ແບບດ່ວນ/ທັນເຫດການ (Breaking News Style)

"ດ່ວນ! ລັດຖະບານເລັ່ງຂະຫຍາຍຕູ້ຊາດ EV ທົ່ວປະເທດ ຮັບມືກະແສຄົນລາວແຫ່ປ່ຽນໃຊ້ລົດໄຟຟ້າ"

- *(ແນວຄິດ: ໃຊ້ຄຳວ່າ "ດ່ວນ!" ຫຼື "Breaking" ເພື່ອສ້າງຄວາມຮູ້ສຶກວ່າເປັນເລື່ອງໃໝ່ ທີ່ຕ້ອງອ່ານທັນທີ)*

4. ແບບເນັ້ນຜົນກະທົບໂດຍກົງຕໍ່ຜູ້ອ່ານ (Personal Impact)

"ຢາກປ່ຽນມາໃຊ້ລົດ EV ຕ້ອງຮູ້! 3 ສິ່ງທ້າທາຍໃຫຍ່ໃນລາວ ຖ້າບໍ່ສຶກສາໃຫ້ດີອາດພາດໄດ້"

- *(ແນວຄິດ: ເຕືອນໃຫ້ຜູ້ອ່ານຮູ້ສຶກວ່າ ຖ້າພວກເຂົາບໍ່ກົດອ່ານ ພວກເຂົາອາດຈະເສຍຜົນປະໂຫຍດ ຫຼື ຕັດສິນໃຈຜິດພາດ)*

5. ແບບສັ້ນກະຊັບ (ບໍ່ເກີນ 15 ຄຳ ສຳລັບລົງ TikTok)

"ລາຄານ້ຳມັນແພງ ໃຜໆກໍຫັນມາຂີ່ລົດ EV! ມາເບິ່ງວ່າມັນປະຢັດໄດ້ສ່ຳໃດ?"

ຕົວຢ່າງການໃຊ້: https://claude.ai/ ເພື່ອບອກທີ່ມາຂອງຂ່າວ

ຕົວຢ່າງແບບບໍ່ມີປະສິດຕິພາບ:

ຊ່ວຍສະຫຼຸບເນື້ອໃນນີ້ໃຫ້ແດ່ໃນຫົວຂໍ້"ການຊ່ວຍເຫຼືອຄົນງານ 7 ຄົນທີ່ຕິດຢູ່ໃນຖ້ຳຢູ່ເມືອງລ່ອງແຈ້ງ, ແຂວງໄຊສົມບູນ“

ຜົນຮັບ:



ແບບມີອາຊີບ (RCIO Format):

ຕົວຢ່າງ: ຈົ່ງສະຫຼຸບບົດຄວາມນີ້ໃຫ້ເປັນ 3 ປະເດັນຍ່ອຍ ໂດຍໃຊ້ພາສາທີ່ກະຊັບ ແລະ ເຂົ້າໃຈງ່າຍ ການຊ່ວຍເຫຼືອ ຄົນງານ 7 ຄົນທີ່ຕິດຢູ່ໃນຖ້ຳຢູ່ເມືອງລ່ອງແຈ້ງ, ແຂວງໄຊສົມບູນ



ຄວນລະວັງການນຳໃຊ້ AI

AI ຄື "ຜູ້ຊ່ວຍ" ບໍ່ແມ່ນ "ຜູ້ຕັດສິນໃຈ". ນັກຂ່າວຕ້ອງກວດສອບ Fact-check) ຕົວເລກ, ຊື່ບຸກຄົນ, ແລະ ສະຖານທີ່ ທີ່ AI ສະຫຼຸບອອກມາທຸກຄັ້ງ ກ່ອນຈະນຳໄປລາຍງານຂ່າວແທ້ ເພາະ AI ບໍ່ມີຄວາມຮັບຜິດຊອບທາງກົດໝາຍ ແລະ ຈັນຍາບັນ ແຕ່ນັກຂ່າວມີ.

ພາກທີ2: ການສ້າງຮູບພາບ ປະກອບຂ່າວດ້ວຍ AI

1. ຫຼັກການຂຽນ Prompt ເພື່ອສ້າງຮູບພາບຂ່າວໃຫ້ສົມຈິງ (Photo-realism)

ການທີ່ຈະໃຫ້ AI ສ້າງພາບອອກມາໃຫ້ກົງກັບ Mood & Tone ຂອງຂ່າວ, ນັກຂ່າວຕ້ອງຮູ້ຈັກ ລະຫັດຄຳ “keyword" ຂອງແຕ່ແບບໂດຍສາມາດແບ່ງອອກເປັນ 4 ແບບຫຼັກ ທີ່ນິຍົມໃຊ້ໃນວົງການສື່ ດັ່ງນີ້:

ຮູບແບບການໃຊ້ພາບ (Style)	ລະຫັດຄຳທີ່ຕ້ອງໃຊ້ (Keywords)	ເໝາະສົມກັບຂ່າວປະເພດໃດ
1. ພາບຖ່າຍຂ່າວຈິງ (Photojournalism)	Photojournalism, Candid shot, Documentary photography, Realistic texture	ຂ່າວສັງຄົມ, ຂ່າວອຸປະຕິເຫດ/ ໄພພິບັດ (conceptual), ຂ່າວລຶ້ງພື້ນ ທີ່ທົ່ວໄປ
2. ພາບແຕ້ມກຣາຟິກ (Flat Vector)	Flat vector illustration, Minimalist, Clean lines, Solid color background	ຂ່າວເສດຖະກິດ, ຂ່າວວິເຄາະ, ບົດ ຄວາມສະແດງຄວາມຄິດເຫັນ (Opinion piece)
3. ພາບ 3 ມິຕິ (Isometric 3D)	3D isometric design, Clay render style, Vibrant colors, Modern tech aesthetic	ຂ່າວເຕັກໂນໂລຊີ, ຂ່າວການເງິນດີຈິ ຕອນ (FinTech), ຂ່າວທຸລະກິດສະ ຕາດອັບ
4. ພາບແນວຄິດນາມມະທຳ (Abstract Conceptual)	Abstract art, Surreal background, Conceptual illustration, Symbolic representation	ຂ່າວສຸຂະພາບຈິດ, ຂ່າວການເມືອງ ລະດັບມະຫາພາກ, ຂ່າວທີ່ບໍ່ມີຕົວຕົນ ໃຫ້ຖ່າຍ

2. ຕົວຢ່າງ Prompt

ຕົວຢ່າງທີ 1: ແບບ "Flat Vector" (ສຳລັບຂ່າວເສດຖະກິດ/ການເງິນ)

- **Prompt:** A thumbnail illustration of a large silver coin with a small arrow pointing downwards, clean lines, light grey background, with the numeral 10,000, corporate style, editorial illustration. — 16:9
- **Prompt:** ພາບປະກອບແບບຫຍໍ້ຂອງຫຼຽນເງິນກີບຂະໜາດໃຫຍ່ທີ່ມີລູກສອນນ້ອຍໆຊີ້ລົງລຸ່ມ, ເສັ້ນສະອາດ, ພື້ນຫຼັງສີຂີ້ເຖົ່າອ່ອນໆ, ມີຕົວເລກຈຳນວນເງິນ 10,000 ຮູບແບບອົງກອນ, ຮູບປະກອບບັນນາທິການ. — 16:9

ຜົນໄດ້ຮັບ:

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
LUANG PRABANG
10,000 ກີບ
ລາຄາເງິນກີບຫຼຸດລົງ
ສະຖິຕິການຫຼຸດລົງຂອງເງິນກີບ (LAK)

2. ຕົວຢ່າງ Prompt

ຕົວຢ່າງທີ 2: "Isometric 3D" (ສຳລັບຂ່າວເຕັກໂນໂລຊີ /AI)

Prompt: A 3D isometric illustration of a smartphone displaying a secure AI neural network floating above it, soft clay render style, pastel colors, modern tech aesthetic, isolated background. --ar 16:9

Prompt: ຮູບພາບ 3D isometric ຂອງສະມາດໂຟນທີ່ສະແດງເຄືອຂ່າຍ neural AI ທີ່ປອດໄພທີ່ລອຍຢູ່ເທິງມັນ, ຮູບແບບການສະແດງຂອງດິນເຜົ່າອ່ອນ, ສີ pastel, ຄວາມງາມທາງດ້ານເຕັກໂນໂລຢີທີ່ທັນສະໄໝ, ພື້ນຫລັງທີ່ໂດດດ່ຽວ. —ar 16:9

ຜົມໄດ້ຮັບ:

3. ຈັນຍາບັນໃນການໃຊ້ຮູບ AI ໃນງານຂ່າວ (Journalism Ethics for AI Images)

ນີ້ຄືພາກສ່ວນທີ່ສຳຄັນທີ່ສຸດ ເພາະຄວາມໜ້າເຊື່ອຖື (Credibility) ຄືສິ່ງທີ່ມີຄ່າທີ່ສຸດຂອງນັກຂ່າວ. ໃນຍຸກທີ່ **AI ສາມາດແຍກພາບຈິງ-ພາບປອມໄດ້ຍາກ**, ນັກຂ່າວຕ້ອງຍຶດຖືຫຼັກການ **"3 ປ້າຍໄຟຈໍລາຈອມ"** ດັ່ງນີ້:

- **ສິ່ງທີ່ "ຫ້າມເຮັດ" ເດັດຂາດ**
  - **ຫ້າມສ້າງພາບ Deepfake: ຫ້າມໃຊ້ AI ສ້າງພາບໃບໜ້າຂອງບຸກຄົນທີ່ມີຕົວຕົນຈິງ** (ເຊັ່ນ: ນັກການເມືອງ, ດາລາ) ໃນເຫດການທີ່ພວກເຂົາບໍ່ໄດ້ເຮັດ ຫຼື ບໍ່ໄດ້ຢູ່ບ່ອນນັ້ນຈິງ.
  - **ຫ້າມບິດເບືອນສະຖານະການ (Fabrication): ຫ້າມໃຊ້ AI ສ້າງພາບເຫດການສະເພາະເຈາະຈົງ ເພື່ອທົດແທນການບໍ່ມີພາບຖ່າຍແທ້** ເຊັ່ນ: ສ້າງພາບໄຟໄໝ້ຢູ່ສະຖານທີ່ໃດໜຶ່ງ ທີ່ບໍ່ໄດ້ເກີດຂຶ້ນແທ້.

3. ຈັນຍາບັນໃນການໃຊ້ຮູບ AI ໃນງານຂ່າວ (Journalism Ethics for AI Images)

ສິ່ງທີ່ "ຕ້ອງລະວັງ" ແລະ ພິຈາລະນາຢ່າງເຄັ່ງຄັດ (Caution)

- **ການໃຊ້ພາບແທນ (Representative Image):** ຫ້າມໃຫ້ພາບ AI ສົມຈິງເກີນໄປ ຈົນຄົນອ່ານຄິດວ່າເປັນພາບຖ່າຍຈາກສະຖານທີ່ຈິງ. ຖ້າຈະໃຊ້ ຕ້ອງເລືອກແບບທີ່ເບິ່ງອອກຊັດເຈນວ່າເປັນພາບແຕ້ມ ຫຼື ພາບ 3 ມິຕິ.
- **ຄວາມລຳອຽງຂອງ AI (AI Bias):** AI ມັກຈະສ້າງພາບຕາມຄວາມຊິນເຄີຍ (ເຊັ່ນ: ຖ້າສັ່ງຮູບ "ທ່ານໝໍ" ມັນມັກຈະ Gen ຮູບຜູ້ຊາຍ, ຖ້າສັ່ງ "ພະຍາບານ" ມັກຈະເປັນຜູ້ຍິງ).

ນັກຂ່າວຕ້ອງປັບ Prompt ເພື່ອໃຫ້ມີຄວາມເທົ່າທຽມ ແລະ ຫຼາກຫຼາຍ.

3. ຈັນຍາບັນໃນການໃຊ້ຮູບ AI ໃນງານຂ່າວ (Journalism Ethics for AI Images)

● ສິ່ງທີ່ "ສາມາດເຮັດໄດ້" (Permitted)

- **ພາບແນວຄິດນາມມະທຳ (Conceptual Art):** ໃຊ້ສ້າງພາບທີ່ເປັນນາມມະທຳ ເຊັ່ນ: ຂ່າວເລື່ອງຄວາມກົດດັນໃນການເຮັດວຽກ, ຂ່າວເລື່ອງລະບົບຄວາມປອດໄພທາງໄຊເບີ, ຫຼື ຂ່າວທ່າອ່ຽງເສດຖະກິດໃນອະນາຄົດ.
- **ພາບພື້ນຫຼັງ (Backgrounds):** ໃຊ້ສ້າງພາບພື້ນຫຼັງງາມໆ ເພື່ອເອົາມາໃສ່ຕົວໜັງສື ຫຼື ຫົວຂໍ້ຂ່າວ (Infographic Background).

ກົດເຫຼັກຂອງຄວາມໂປ່ງໃສ (The Disclosure Rule):

ບໍ່ວ່າຈະໃຊ້ AI ສ້າງພາບໃນລະດັບໃດກໍຕາມ ນັກຂ່າວ "ຕ້ອງ" ໃສ່ເຄຣດິດກຳກັບໄວ້ຢູ່ມຸມພາບ ຫຼື ທ້າຍບົດຄວາມສະເໝີ ເຊັ່ນ: "ພາບປະກອບ: ຜະລິດໂດຍ AI" ຫຼື "Illustration generated by AI" ເພື່ອສະແດງຄວາມບໍລິສຸດໃຈຕໍ່ຜູ້ບໍລິໂພກຂ່າວ.

ພາກທີ3:

ຈາກສຽງເປັນຂໍ້ຄວາມ ແລະ ຂໍ້ຄວາມເປັນສຽງ

1. ການຖອດສຽງສຳພາດ (Voice to Text)

2. ການປ່ຽນບົດຂ່າວເປັນສຽງພາກ (Text to Voice

1. ການຖອດສຽງສຳພາດ (Voice to Text)

ການຖອດສຽງສຳພາດຈາກແຫຼ່ງຂ່າວ, ງານຖະແຫຼງຂ່າວ ຫຼື ການປະຊຸມຍາວໆ ໃຫ້ກາຍເປັນ ຕົວໜັງສື ເພື່ອເອົາໄປຂຽນເນື້ອໃນຂ່າວຕໍ່.

ເຄື່ອງມືແນະນຳສຳລັບພາສາລາວ:

Genini, GoodTape, Otter.ai , OpenAI Whisper ຫຼື ອື່ນໆ

1. ການຖອດສຽງສຳພາດ (Voice to Text) (ຕໍ່)

ການສ້າງ Prompt ສຳລັບວຽກງານ Audio to Text (ຫຼື Speech-to-Text) ໃຫ້ມີປະສິດທິພາບ ສິ່ງສຳຄັນຄືການກຳນົດ **ບໍລິບົດ (Context)**, **ພາສາ (Language)**, **ແລະ ຮູບແບບຜົນຮັບ (Format)** ໃຫ້ຊັດເຈນ ເພາະ AI ຈະໄດ້ເຂົ້າໃຈລະດັບພາສາ ແລະ ຄຳສັບສະເພາະໄດ້ດີຂຶ້ນ.

ນີ້ຄືຕົວຢ່າງ Prompts ທີ່ທ່ານສາມາດນຳໄປປັບໃຊ້ຕາມຄວາມເໝາະສົມ:

1. ແບບທົ່ວໄປ (ຖອດຄວາມແບບຄົບຖ້ວນ)

Prompt: "ຈົ່ງຖອດຄວາມ (Transcribe) ຟາຍສຽງນີ້ໃຫ້ເປັນຕົວໜັງສືຢ່າງລະອຽດ ແລະ ຖືກຕ້ອງຕາມຄຳເວົ້າໃນສຽງທຸກປະໂຫຍກ. ຮັກສາຄຳເວົ້າເດີມໄວ້ໃຫ້ຫຼາຍທີ່ສຸດ, ໃສ່ເຄື່ອງໝາຍວັກຕອນໃຫ້ເໝາະສົມເພື່ອໃຫ້ອ່ານງ່າຍ, ແລະ ແຍກຫຍໍ້ໜ້າເມື່ອມີການປ່ຽນຫົວຂໍ້ເວົ້າ.“

2. ແບບທາງການ / ປະຊຸມ / ສຳພາດ (ຈັດຮູບແບບໃຫ້ອ່ານງ່າຍ)

Prompt: "ຈົ່ງແປງສຽງນີ້ໃຫ້ເປັນຕົວໜັງສື ສຳລັບໃຊ້ໃນການປະຊຸມທາງການ.

ຂໍ້ກຳນົດ: ໃຫ້ຕັດຄຳຟຸມເຟືອຍ ຫຼື ຄຳອຸທານອອກ (ເຊັ່ນ: ເອີ..., ອ່າ..., ແບບວ່າ...) ເພື່ອໃຫ້ປະໂຫຍກກະທັດຮັດດີ.

ຮູບແບບ: ໃຫ້ແຍກຜູ້ເວົ້າຢ່າງຊັດເຈນ (ເຊັ່ນ: ຜູ້ເວົ້າ 1: ..., ຜູ້ເວົ້າ 2: ...) ຖ້າມີຫຼາຍຄົນ.“

ນີ້ຄືຕົວຢ່າງ Prompts ທີ່ທ່ານສາມາດນຳໄປປັບໃຊ້ຕາມຄວາມເໝາະສົມ:

3. Prompt: "ຈົ່ງຖອດຄວາມຟາຍສຽງນີ້ ເຊິ່ງເປັນການບັນຍາຍໃນຫົວຂໍ້ [ລະບຸຫົວຂໍ້ ເຊັ່ນ: Computer Science / Machine Learning]. ຂໍໃຫ້ເອົາໃຈໃສ່ເປັນພິເສດກັບຄຳສັບສະເພາະທາງເຕັກນິກ ແລະ ຄຳສັບພາສາອັງກິດ ໂດຍຂຽນໃຫ້ຖືກຕ້ອງຕາມຫຼັກການ (ເຊັ່ນ: ຂຽນເປັນພາສາອັງກິດທັບສັບ ຫຼື ຕາມບໍລິບົດຂອງເນື້ອໃນ).“

4. ແບບສະຫຼຸບເນື້ອໃນທັນທີ (Transcribe + Summarize)

Prompt: "ຈົ່ງຖອດຄວາມສຽງນີ້ໃຫ້ເປັນຕົວໜັງສື ຈາກນັ້ນໃຫ້ເຮັດສະຫຼຸບຫົວຂໍ້ສຳຄັນ (Key Takeaways) ເປັນຂໍ້ໆ (Bullet points) ຢູ່ທ້າຍເອກະສານ ເພື່ອໃຫ້ເຂົ້າໃຈງ່າຍ ແລະ ສາມາດນຳໄປໃຊ້ຕໍ່ໄດ້ທັນທີ."

ตົວຢ່າງການໃຊ້ ແບບທົ່ວໄປ (ຖອດຄວາມແບບຄົບຖ້ວນ)

ໃຊ້ https://gemini.google.com/

"ຈົ່ງຖອດຄວາມ (Transcribe) ໄຟລ໌ສຽງນີ້ໃຫ້ເປັນຕົວໜັງສືຢ່າງລະອຽດ ແລະ ຖືກຕ້ອງຕາມຄຳເວົ້າໃນສຽງທຸກປະໂຫຍກ. ຮັກສາຄຳເວົ້າເດີມໄວ້ໃຫ້ຫຼາຍທີ່ສຸດ, ໃສ່ເຄື່ອງໝາຍວັກຕອນໃຫ້ເໝາະສົມເພື່ອໃຫ້ອ່ານງ່າຍ, ແລະ ແຍກຫຍໍ້ໜ້າເມື່ອມີການປ່ຽນຫົວຂໍ້ເວົ້າ."

ຕົວຢ່າງການໃຊ້ ແບບສະຫຼຸບເນື້ອໃນທັນທີ (Transcribe + Summarize)

ໃຊ້ https://gemini.google.com/

ຈ່ຶງຖອດຄວາມສຽງນີ້ໃຫ້ເປັນຕົວໜັງສ ຈາກນັ້ນໃຫ້ເຮັດສະຫຼຸບຫົວຂໍ້ສຳຄັນ (Key Takeaways) ເປັນຂໍ້ໆ (Bullet points) ຢູ່ທ້າຍເອກະສານ ເພ່ືອໃຫ້ເຂ້ົາໃຈ່ງ່າຍ ແລະ ສາມາດນຳໄປໃຊ້ຕໍ່ໄດ້ທັນທ.ິ"

2. ການປ່ຽນບົດຂ່າວເປັນສຽງພາກ (Text to Voice)

- ການປ່ຽນບົດຂ່າວເປັນສຽງພາກ (Text-to-Speech ຫຼື TTS) ແມ່ນວິທີທີ່ດີເລີດໃນການເພີ່ມຊ່ອງທາງການຮັບຮູ້ຂ່າວສານ, ເໝາະສຳລັບຄົນທີ່ບໍ່ສະດວກອ່ານ ຫຼື ຢາກຟັງຂ່າວໃນຮູບແບບ Podcast.

- ປັດຈຸບັນ, ເຕັກໂນໂລຊີ AI ໄດ້ພັດທະນາໄປໄກ ເຮັດໃຫ້ສຽງພາກພາສາລາວມີຄວາມເປັນທຳມະຊາດ ແລະ ໃກ້ຄຽງກັບສຽງມະນຸດຫຼາຍຂຶ້ນ.

2. ການປ່ຽນບົດຂ່າວເປັນສຽງພາກ (Text to Voice)

ຂັ້ນຕອນ ແລະ ເຄື່ອງມືທີ່ທ່ານສາມາດນຳໃຊ້ໄດ້:

1. ເຄື່ອງມື ແລະ ເວັບໄຊຍອດນິຍົມ ສຳລັບພາສາລາວ

aistudio.google.com: ເປັນລະບົບທີ່ສະຖຽນ ແລະ ມີສຽງພາສາລາວໃຫ້ເລືອກ (ທັງສຽງຍິງ ແລະ ສຽງຊາຍ). ສຽງມີຄວາມຊັດເຈນ ແລະ ຖືກຕ້ອງຕາມຫຼັກໄວຍາກອນສູງ.

Microsoft Azure Speech Studio: ມີ AI Voice ພາສາລາວທີ່ເປັນທຳມະຊາດຫຼາຍ, ສາມາດປັບຄວາມໄວ ແລະ ໂທນສຽງໄດ້ດີ.

CapCut (ແອັບພລິເຄເຊີ່ນ): ຖ້າທ່ານຕ້ອງການເຮັດຄລິບຂ່າວລົງ TikTok ຫຼື Facebook Reels, CapCut ມີຟັງເຊີ່ນ **"Text to Speech"** ທີ່ຮອງຮັບພາສາລາວ, ເຊິ່ງໃຊ້ງານງ່າຍ ແລະ ໃຊ້ລ້າໆ.

2. ການປ່ຽນບົດຂ່າວເປັນສຽງພາກ (Text to Voice)

ຂັ້ນຕອນການປ່ຽນບົດຂ່າວເປັນສຽງພາກ

ເພື່ອໃຫ້ໄດ້ສຽງພາກທີ່ມີຄຸນນະພາບ ແລະ ເປັນມືອາຊີບ, ຄວນເຮັດຕາມຂັ້ນຕອນດັ່ງນີ້:

ຂັ້ນຕອນທີ 1: ກະກຽມ ແລະ ປັບແຕ່ງບົດຂ່າວ (Script)

ຕັດຄຳສັບທີ່ຍາກ: ປ່ຽນຄາສັບທີ່ອ່ານຍາກ ຫຼື ຄຳທັບສັບພາສາຕ່າງປະເທດໃຫ້ເປັນຄຳທີ່ອ່ານງ່າຍ.

ໃສ່ເຄື່ອງໝາຍວັກຕອນ: AI ຈະຢຸດພັກຫາຍໃຈຕາມເຄື່ອງໝາຍວັກ. ຄວນຍະຫວ່າງ ( ) ຫຼື ໃສ່ເຄື່ອງ ໝາຍຈຸດ (,) ໃນຈຸດທີ່ຕ້ອງການໃຫ້ AI ເວັ້ນຈັງຫວະ.

ຂຽນຕົວເລກເປັນຕົວໜັງສື: ເພື່ອປ້ອງກັນບໍ່ໃຫ້ AI ອ່ານຜິດ (ຕົວຢ່າງ: ປ່ຽນຈາກ "2026" ເປັນ "ສອງພັນຊາວ ຫົກ").

ຂັ້ນຕອນທີ 2: ເລືອກສຽງ ແລະ ປັບແຕ່ງ (ຕັ້ງຄ່າ AI)

ເລືອກເພດຂອງສຽງ (ຍິງ/ຊາຍ) ໃຫ້ເໝາະສົມກັບປະເພດຂ່າວ.

ປັບຄວາມໄວ (Speed) ໃຫ້ຢູ່ລະດັບພໍດີ (ປະມານ 1.0x ເຖິງ 1.05x) ບໍ່ໃຫ້ຊ້າ ຫຼື ໄວເກີນໄປ.

ຂັ້ນຕອນທີ 3: ກວດສອບ ແລະ ດາວໂຫຼດ

ກົດປຸ່ມ **Preview** ເພື່ອຟັງທົດສອບກ່ອນ.

ຖ້າມີຈຸດໃດອ່ານຜິດ, ໃຫ້ແປງວິທີຂຽນຢູ່ໃນບົດຄວາມ (ບາງຄັ້ງອາດຕ້ອງຂຽນຄຳນັ້ນຕາມສຽງອ່ານ ເພື່ອໃຫ້ AI ອອກສຽງຖືກ).

ກົດ **Export** ຫຼື **Download** ເປັນຟາຍສຽງ **(.mp3** ຫຼື **.wav).**

ຂໍ້ແນະນຳເພີ່ມເຕີມ: ຖ້າທ່ານຕ້ອງການເຮັດຂ່າວວີດີໂອ, ຫຼັງຈາກໄດ້ຟາຍສຽງມາແລ້ວ ໃຫ້ເອົາໄປໃສ່ໃນໂປຣແກຣມຕັດຕໍ່ (ເຊັ່ນ CapCut, Premiere Pro) ແລ້ວໃສ່ສຽງດົນຕີເບົາໆ (Background Music) ທາງຫຼັງ ຈະຊ່ວຍໃຫ້ບົດຂ່າວມີຄວາມໜ້າສົນໃຈ ແລະ ເປັນມືອາຊີບຂຶ້ນຕື່ມ.

ต໊ວຢ່າງ: Google ai studio




aistudio.google.com/prompts/new_chat
Search Results - Spr...
google translate - G...
Principal Componen...
Market Basket Anal...
Super AI Engineer
การวิเคราะห์และออกแบบ...
Google AI Studio
Playground
1
History
Build
Dashboard
Documentation
Upgrade to unlock more
Access higher limits, Pro models, and more.
Search
Playground
2
Models
Agents
Explore Google models
Featured
Test out our most advanced and newest models.
Code and Chat
Build chatbots, agents, and code with Gemini 3.
Image Generation
Create and edit images with Nano Banana and Imagen.
3
Video Generation
Generate videos with Veo models, our state of the art video generation models.
Speech and Music
Explore our text to speech and music generation models.
Real-time
Real-time voice and video with Live API.

Speech and Music

Explore our text to speech and music generation models.

4

Gemini 3.1 Flash TTS Preview • New

Gemini 3.1 Flash TTS: Powerful, low-latency speech generation. Enjoy natural outputs, steerable prompts, and new expressive audio tags for precise narration control.

Lyria 3 Pro Preview • Paid

Our advanced, full-song generative model with deep compositional understanding, optimized for precise structural control and complex transitions across diverse musical styles.

Lyria 3 Clip Preview • Paid

Our low-latency, music generation model optimized for high-fidelity audio clips and precise rhythmic control.

This agent can execute code, take real actions, and use large number of tokens. You can stop the agent at any time.


Google AI Studio
EXPLORE
Playground
History
BUILD
New app
My apps
Gallery
MANAGE
Dashboard
Documentation
Playground
5
Turn text into natural-sounding speech...
Quickstart Templates
The Everyday Assistant
A helpful and professional personal assistant.
The Guarded NPC
Creates multi-character dialogue in a fantasy setting.
The Energetic Co-Host
Podcast style conversation.
The Master Storyteller
Crafts storytelling narration.
The Ad Voiceover
A smooth, premium commercial voice.
The Training Guide
A clear and authoritative corporate
The Game Show Host
The Patient Teacher
A patient and encouraging language


Playground
Text
Composer
Run settings
Get code
Scene
Scence1
❻ ตั้งชื่อว่า Scene1
Sample Context
Gemini 3.1 Flash TTS Preview
gemini-3.1-flash-tts-preview
Gemini 3.1 Flash TTS: Powerful, low-latency speech generation. Enjoy natural outputs, steerable prompts, and new expressive audio tags for precise...
Model settings
Speaker 1 - Achernar
❼ ป้อมข้อความที่ต้องการให้ออกสียง
ກະແສລົດ EV ໃນລາວ ກຳລັງເຕີບໂຕຢ່າງແຮງ: ທາງເລືອກໃໝ່ເພື່ອການປະຢັດ ແລະ ເປັນມິດຕໍ່ສິ່ງແວດລ້ອມ
ວຽງຈັນ, ສປປ ລາວ – ໃນປັດຈຸບັນ, ກະແສການຫັນມາໃຊ້ຍານພາຫະນະໄຟຟ້າ ຫຼື ລົດ EV (Electric Vehicle) ຢູ່ໃນ ສປປ ລາວ ແມ່ນກຳລັງໄດ້ຮັບຄວາມນິຍົມ ແລະ ມີການຂະຫຍາຍຕົວຢ່າງກ້າວກະໂດດ. ຢູ່ຕາມທ້ອງຖະໜົນ ໂດຍສະເພາະໃນຕົວເມືອງໃຫຍ່ ເຊັ່ນ ນະຄອນຫຼວງວຽງຈັນ, ເຮົາສາມາດເຫັນລົດໄຟຟ້າທ້ຽບແຜດລົດເກ໋ງ, ລົດ SUV ແລະ ລົດຈັກໄຟຟ້າ ສັນຈອນໄປມາຢ່າງຫນາຕາ ເຊິ່ງສະທ້ອນໃຫ້ເຫັນເຖິງການປ່ຽນແປງຄ່ານິຍົມຂອງຜູ້ບໍລິໂພກລາວ ທີ່ຫັນມາໃສ່ໃຈເລືອກການປະຢັດຕົ້ນທຶນ ແລະ ການອະນຸລັກສິ່ງແວດລ້ອມຫຼາຍຂຶ້ນ.
Speaker settings
Achernar
Soft, Higher pitch
❽ Speaker 1 เลือกสียง
+ Add speech block
Run Ctrl ↵

[ข้อความ]

Speaker settings

Director's note

Style: Vocal Smile ❾

Pace: Pace

Accent: Accent

Voice

Search voices

Achernar Current ❿
Soft · Higher pitch

Achird
Friendly · Lower middle pitch

Algenib
Gravelly · Lower pitch

Algieba
Smooth · Lower pitch

Playground

Text | Composer

Scene

Scence1

Sample Context

Speaker 1 - Achernar

ກະແສລົດ EV ໃນລາວ ກຳລັງເຕີບໂຕຢ່າງແຮງ: ທາງເລືອກໃໝ່ເພື່ອການປະຢັດ ແລະ ເປັນມິດຕໍ່ສິ່ງແວດລ້ອມ
ວຽງຈັນ, ສປປ ລາວ – ໃນປັດຈຸບັນ, ກະແສການຫັນມາໃຊ້ລົດພະຫະນະໄຟຟ້າ ຫຼື ລົດ EV (Electric Vehicle) ຢູ່ໃນ ສປປ ລາວ ແມ່ນກຳລັງໄດ້ຮັບຄວາມນິຍົມ ແລະ ມີການຂະຫຍາຍຕົວຢ່າງກ້າວກະໂດດ. ຢູ່ຕາມທ້ອງຖະໜົນ ໂດຍສະເພາະໃນຕົວເມືອງໃຫຍ່ ເຊັ່ນ ນະຄອນຫຼວງວຽງຈັນ, ເຮົາ ສາມາດເຫັນລົດໄຟຟ້າທ້າວປະເພດລົດເກ໋ງ, ລົດ SUV ແລະ ລົດຈັກໄຟຟ້າ ສັນຈອນໄປມາຢ່າງຫນາຕາ ເຊິ່ງສະທ້ອນໃຫ້ເຫັນເຖິງການປ່ຽນແປງຄ່ານິຍົມຂອງຜູ້ບໍລິໂພກລາວ ທີ່ຫັນມາໃສ່ໃຈເລືອງການປະຢັດຕົ້ນທຶນ ແລະ ການອະນຸລັກສິ່ງແວດລ້ອມຫຼາຍຂຶ້ນ.

+ Add speech block

Run settings | Get code

Gemini 3.1 Flash TTS Preview

gemini-3.1-flash-tts-preview
Gemini 3.1 Flash TTS: Powerful, low-latency speech generation. Enjoy natural outputs, steerable prompts, and new expressive audio tags for precise...

Model settings

Speaker settings

Achernar — Speaker 1
Soft, Higher pitch

Run Ctrl ↵



ດາວໂຫລດສຽງ

ພາກທີ4: ການໂຄລນສຽງ (Voice Cloning)

- ເຕັກນິກການອັດສຽງຕົ້ນແບບໃຫ້ມີຄຸນນະພາບ

- ການສ້າງສຽງໂຄລນ ແລະ ການນຳໄປໃຊ້

ການໂຄລນສຽງ (Voice Cloning)

- **ການໂຄລນສຽງ (Voice Cloning)** ແມ່ນເຕັກໂນໂລຊີ AI ທີ່ຮຽນຮູ້ ແລະ ຖອດຖອນເອົາເອກະລັກທາງດ້ານສຽງຂອງມະນຸດ (ເຊັ່ນ: **ໂທນສຽງ, ຈັງຫວະ, ສຳນຽງ ແລະ ອາລົມ**) ຈາກຟາຍສຽງຕົວຢ່າງ ເພື່ອນຳມາສ້າງເປັນ "ສຽງດິຈິຕອນ" ທີ່ສາມາດເວົ້າຄຳສັບໃດກໍໄດ້ຕາມທີ່ເຮົາພິມລົງໄປ.
- ໃນການຜະລິດບົດຂ່າວ, ເຕັກນິກນີ້ຊ່ວຍໃຫ້ເຮົາສາມາດສ້າງສຽງພາກຂອງນັກຂ່າວຄົນເດີມໄດ້ຢ່າງຫຼວງຫຼາຍ ໂດຍບໍ່ຈຳເປັນຕ້ອງໃຫ້ນັກຂ່າວມາອັດສຽງໃນຫ້ອງອັດທຸກໆມື້.

1. ເຕັກນິກການອັດສຽງຕົ້ນແບບໃຫ້ມີຄຸນນະພາບ

ຄຸນນະພາບຂອງສຽງໂຄລນ ຈະຂຶ້ນກັບ **"ຄຸນນະພາບຂອງສຽງຕົ້ນແບບ"** ເປັນຫຼັກ, ຫາກສຽງຕົ້ນແບບມີສຽງລົບກວນ, AI ກໍຈະໂຄລນເອົາສຽງລົບກວນນັ້ນເຂົ້າໄປໃນລະບົບນຳ.

ເພື່ອໃຫ້ໄດ້ສຽງທີ່ດີທີ່ສຸດ, ຄວນປະຕິບັດດັ່ງນີ້:

- **ສະພາບແວດລ້ອມ (Environment):** ອັດສຽງໃນຫ້ອງທີ່ງຽບສະຫງັດ ຫຼີກເວັ້ນສຽງລົບກວນ ເຊັ່ນ: ສຽງພັດລົມ, ສຽງແອ, ຫຼື ສຽງລົດ. ຫາກເປັນໄປໄດ້ ຄວນໃຊ້ຫ້ອງອັດສຽງທີ່ມີໂຟມກັນສຽງສະທ້ອນ (Echo).
- **ອຸປະກອນ (Equipment):** ໃຊ້ໄມໂຄຣໂຟນຄຸນນະພາບສູງ ແລະ ຄວນໃສ່ແຜ່ນກອງສຽງລົມ ເພື່ອຫຼຸດສຽງກະແທກຂອງລົມຫາຍໃຈ ຫຼື ພະຍັນຊະນະບາງຕົວ (ເຊັ່ນ: ພ, ຟ, ຕ).

1. ເຕັກນິກການອັດສຽງຕົ້ນແບບ ໃຫ້ມີຄຸນນະພາບ (ຕໍ່)

- **ການອອກສຽງ:**
  - ✓ ຜູ້ອ່ານຕ້ອງອອກສຽງໃຫ້ຊັດເຈນ, ບໍ່ເວົ້າໄວ ຫຼື ຊ້າເກີນໄປ.
  - ✓ ຮັກສາລະດັບຄວາມດັງຂອງສຽງໃຫ້ສະໝ່ຳສະເໝີ.
  - ✓ ໃຊ້ນ້ຳສຽງທີ່ເປັນທຳມະຊາດ ແລະ ເໝາະສົມກັບປະເພດຂ່າວ (ບໍ່ຄວນໃສ່ອາລົມຫຼີ້ນຫຼາຍເກີນໄປ ເພາະ ຈະເຮັດໃຫ້ AI ເອົາໄປໃຊ້ຕໍ່ໃນບົດຂ່າວອື່ນໄດ້ຍາກ).
- **ຮູບແບບ (format) ຟາຍສຽງ:** ຄວນບັນທຶກເປັນຟາຍທີ່ບໍ່ມີການບີບອັດຄຸນນະພາບ ເຊັ່ນ **.WAV** (Sample Rate ຢ່າງໜ້ອຍ 44.1 kHz ຫຼື 48 kHz, 24-bit) ແລະ ຄວາມຍາວຂອງສຽງລວມຄວນຢູ່ ລະຫວ່າງ 5-30 ນາທີ (ຂຶ້ນກັບແພລດຟອມ AI ທີ່ເລືອກໃຊ້).

2. ການນຳໄປໃຊ້ໃນວຽກງານຕົວຈິງ (Applications & Use Cases)

ເມື່ອໄດ້ສຽງໂຄລນທີ່ສົມບູນແລ້ວ, ເຮົາສາມາດນຳໄປປະຍຸກໃຊ້ໃນວຽກງານສື່ ແລະ ຂ່າວສານໄດ້ຢ່າງຫຼາກຫຼາຍ:

ຮູບແບບການນຳໃຊ້	**ຜົນປະໂຫຍດ ແລະ ວິທີການ**
ການຜະລິດຂ່າວປະຈຳວັນ	ພຽງແຕ່ກ່າຍເອົາບົດຂ່າວທີ່ຂຽນໃໝ່ ວາງລົງໃນລະບົບ, AI ກໍຈະພາກສຽງອອກມາເປັນສຽງນັກຂ່າວປະຈຳຊ່ອງໄດ້ທັນທີ ໂດຍບໍ່ຕ້ອງເສຍເວລາເຂົ້າຫ້ອງອັດ.
ການແກ້ໄຂຄຳຜິດ (Audio Editing)	ຫາກນັກຂ່າວອ່ານຜິດໃນບາງຈຸດ, ເຮົາບໍ່ຈຳເປັນຕ້ອງໃຫ້ນັກຂ່າວມາອັດໃໝ່. ພຽງແຕ່ແປງຂໍ້ຄວາມສະເພາະຄຳທີ່ຖືກຕ້ອງ ແລ້ວນຳສຽງ AI ໄປຕັດຕໍ່ໃສ່ແທນ.
ການແປຂ່າວຫຼາຍພາສາ (Cross-Lingual)	ແພລດຟອມ AI ລະດັບສູງ (ເຊັ່ນ ElevenLabs) ສາມາດເອົາສຽງໂຄລນພາສາລາວ ໄປເວົ້າເປັນພາສາອັງກິດ, ຈີນ ຫຼື ໄທ ໂດຍທີ່ຍັງຮັກສາເອກະລັກ ແລະ ໂທນສຽງຂອງນັກຂ່າວຄົນເດີມໄວ້ໄດ້

ຂໍ້ຄວນລະວັງ ແລະ ຈັນຍາບັນ (Ethics & Security)

ການໂຄລນສຽງຕ້ອງໄດ້ຮັບ **"ຄວາມຍິນຍອມ"** ຈາກເຈົ້າຂອງສຽງເປັນລາຍລັກອັກສອນ ສະເໝີ ເພື່ອປ້ອງກັນບັນຫາການລະເມີດລິຂະສິດ. ນອກຈາກນັ້ນ, ຄວນມີມາດຕະການ ຮັກສາຄວາມປອດໄພຂອງຟາຍສຽງໂຄລນໃນລະບົບ ເພື່ອບໍ່ໃຫ້ບຸກຄົນພາຍນອກນຳໄປໃຊ້ ໃນທາງທີ່ຜິດ ຫຼື ສ້າງຂ່າວປອມ (Deep fake Voice).

ตົວຢ່າງການນຳໃຊ້: https://www.minimax.io



❶ ເລືອກ Voice Clone

ຈາກນັ້ນຈະສະແດງໜ້າຕ່າງໃຫ້ເຮົາເພື່ອເພີ່ມສຽງທີ່ຕ້ອງການ cloning



ไฟสຽງ



❹ ໃນທີນີ້ເຮົາມີຟາຍສຽງແລ້ວ

❺

1. Remove Background Noise (ຕັດສຽງລົບກວນ)
2. Enable Accent Optimization (ເປີດໃຊ້ງານການປັບປຸງໃຫ້ເຂົ້າກັບສຳນຽງເວົ້າ)


MINIMAX Audio Video
Tutorial
10,000 Upgrade
Text to Speech 2.8 New
Music 2.6 New
AI Tools
Voice Design
Voice Clone
Voice Isolator
Subscribe
Access API
Enable Accent Optimization
Text to Preview
Thai
รัฐบาล สปป.ลาว ยังคงเดินหน้าขับเคลื่อนตามแผนยุทธศาสตร์เดิม คือการผลักดันให้มีสัดส่วนการใช้ยานพาหนะไฟฟ้า (EV) ให้ได้อย่างน้อย ร้อยละ 30 ของยานพาหนะทั้งหมดบนท้องถนนภายในปี 2030 (2573)
ภาพรวมสถานการณ์ในปัจจุบัน:
299 / 300 characters
Credit Usage: 299
I confirm that I have all necessary rights and authorization to upload these voice samples to generate AI content, and I reaffirm that I will abide by the Terms of Service and refrain from using any generated content for illegal or harmful purposes.
Voice slots remaining: 2/3
Generate
❻ ເລືອກພາສາ
❼ ໃສ່ຂໍ້ຄວາມທີ່ຕ້ອງການໃຫ້ AI ອ່ານ
❽ ກົດຢືນຢັນ
❾ ກົດ Generate

ภาพรวมสถานการณ์ในปัจจุบัน:
ตลาดรถยนต์ไฟฟ้าใน สปป.ลาว เติบโตขึ้นอย่างน่าจับตา โดยมีค่ายรถยนต์จากประเทศจีนเป็นผู้เล่นหล

300 / 300 characters

Credit Usage: 300

I confirm that I have all necessary rights and authorization to upload these voice samples to generate AI content, and I reaffirm that I will abide by the Terms of Service and refrain from using any generated content for illegal or harmful purposes.

Voice slots remaining: 2/3

Regenerate

Generated Voice Results

Voice Clone Preview
2'39''

Confirm

❿ ກົດ confirm ເພື່ອຢືນຢັນ



ฟายส฽งที่ cloning แล้ว

ກົດເພື່ອດາວໂລດຟາຍສຽງທີ່ເຮົາ cloning ແລ້ວ

ພາກທີ 5:

ສ້າງ AI ຜູ້ອ່ານຂ່າວແທນ (AI Avatar)

Digital AI Avatar ແມ່ນຫຍັງ?

ຕົວແທນສະເໝືອນຈິງ

Digital Avatar ແມ່ນຕົວ ລະຄອນທີ່ສ້າງຂຶ້ນໂດຍຄອມພິວ ເຕີ ທີ່ມີລັກສະນະຄ້າຍຄືມະນຸດ ແທ້ໆ ທັງການເຄື່ອນໄຫວປາກ, ສີ ໜ້າ ແລະ ທ່າທາງ.

ຂັບເຄື່ອນດ້ວຍ AI

ໃຊ້ລະບົບ Deep Learning ເພື່ອວິເຄາະສຽງ ແລະ ປັບປ່ຽນ ການເຄື່ອນໄຫວໃຫ້ກົງກັບຄຳເວົ້າ (Lip-sync) ໄດ້ຢ່າງສົມບູນ ແບບ.

ເປັນຫຍັງຕ້ອງໃຊ້ AI ໃນການອ່ານຂ່າວ?

ຄວາມໄວ

ສາມາດຜະລິດວີດີໂອຂ່າວໄດ້ທັນທີ ຫຼັງຈາກມີເນື້ອໃນ (Script) ໂດຍບໍ່ຕ້ອງລໍຖ້າການຖ່າຍທຳ.

24/7 Coverage

AI ບໍ່ມີຄວາມເມື່ອຍລ້າ ສາມາດອ່ານຂ່າວດ່ວນໄດ້ຕະຫຼອດ 24 ຊົ່ວໂມງ ໂດຍບໍ່ຕ້ອງໃຊ້ທີມງານຖ່າຍທຳ.

ຫຼາຍພາສາ

ສາມາດແປ ແລະ ອ່ານຂ່າວໄດ້ຫຼາຍກວ່າ 100 ພາສາທົ່ວໂລກ ດ້ວຍສຽງທີ່ເປັນທຳມະຊາດ.

ປະສິດທິພາບ ແລະ ຄວາມປະຢັດ

80%

ຫຼຸດຜ່ອນຄ່າໃຊ້ຈ່າຍໃນການຜະລິດ

ການລົງທຶນທີ່ກຸ້ມຄ່າ

ບໍ່ຈຳເປັນຕ້ອງມີຫ້ອງສະຕູດິໂອລາຄາແພງ, ກ້ອງຖ່າຍຮູບມືອາຊີບ ຫຼື ທີມງານຕັດຕໍ່ຈຳນວນຫຼາຍ. AI ຊ່ວຍໃຫ້ທຸກຄົນສາມາດເປັນເຈົ້າຂອງສະຖານີຂ່າວໄດ້.

ເຄື່ອງມືທີ່ນິຍົມໃນການສ້າງ AI Avatar

HeyGen

ໂດດເດັ່ນເລື່ອງຄວາມສົມຈິງ ແລະ ການເຄື່ອນໄຫວທີ່ເປັນທຳມະຊາດທີ່ສຸດ.

https://app.heygen.com/avatar

Synthesia

ເໝາະສຳລັບການສ້າງວິດີໂອ ອະທິບາຍ ແລະ ຂ່າວສັ້ນ ແບບມືອາຊີບ.

D-ID

ສາມາດປ່ຽນຮູບພາບນິ້ງໃຫ້ ກາຍເປັນ AI Avatar ທີ່ ເວົ້າໄດ້ຢ່າງມະຫັດສະຈັນ.

https://studio.d-id.com/

ເຄື່ອງມືທີ່ນິຍົມໃນການສ້າງ AI Avatar ຂອງ D-iD.com



❶ ກົດ login

ຫຼັງຈາກກົດ login ຜ່ານ gmail ຈະເຂົ້າສູ່ໜ້າ https://studio.d-id.com



studio.d-id.com/avatars

Search Results - Spr... | google translate - G... | Principal Componen... | Market Basket Anal... | Super AI Engineer | การวิเคราะห์และออกแบ... | API Reference - Stre... | All Bookmarks

D-ID

- Home
- Products
- Video Studio
- Video Translate
- Agents
- Avatars
- API
- Upgrade

thongsing Sivongsay

Create with a photo

Upload a photo to create talking head videos.

Upload photo

Create with a video

Higher quality video Avatars.

Create Avatar

Studio Avatar

Partner with us for a fully tailored, lifelike Avatar.

Contact sales

All | My Avatars | Video Avatars | Photo Avatars

My Avatars

+ Create Avatar

Gemini_Generated_Image_17rqus17rqus1...

D-ID Avatars

❸ ก็ดใส่ Create Avatar

ຈະມີຮູບແບບໃຫ້ເລືອກຢູ່ 2 ແບບ ວ່າຈະສ້າງກັບຮູບພາບ ຫຼື ຈະສ້າງກັບວີດີໂອ



❹ ໃນທີນີ້ເຮົາເລືອກ Create with a photo

ເລືອກຮູບພາບທີ່ຕ້ອງການສ້າງເປັນ Avatar




All
My Avatars
Video Avatars
Photo Avatars
My Avatars
Create Avatar
Preview
V2
Gemini_Generated_Image_17rqus17rqus1...
D-ID Avatars
❼ ภ์ดใส่ Preview

Gemini_Generated_Image_17rqus17rqus17rq

❾ ກົດໃສ່ Avatar Video

Avatar Video

Agent

Use this avatar

❽ ກົດໃສ່ Use this Avatar


Untitled video
16:9
Saving...
Templates
Avatar
Script
Background
Text
Shapes
Media
Replace
Emotions
Movements
Position
Fit to page
❿ ກົດໃສ່ Script
❾ກຳນົດສຽງ, ການເຄື່ອນໄຫວ


ເລືອກຮູບແບບຂອງວີດີໂອ
ເລືອກຮູບໃນການສ້າງ script
ວ່າເປັນຂໍ້ຄວາມຫຼື Audio
ກຳນົດສຽງ
Untitled video
16:9
Unsaved
Templates
Avatar
Script
Background
Text
Shapes
Media
Text
Audio
Type or record your script
0/3,875 characters
Emma
English (United States)
Speed (1x)
5.0s


Select voice
ກົດເລືອກພາສາທີ່ຕ້ອງການ
Voices library
Add voice
Search voice
Thai (Thail...
Gender
Age
Use case
Tier
Function
Provider
Voice library
ກົດເລືອກສຽງທີ່ຕ້ອງການ
Niwat
Thai (Thailand)
Achara
Thai (Thailand)
ກົດ Apply to all voice
Krit MAI-Voice-2
Deprecating
Apply to all Avatars
Apply voice



ຫຼັງຈາກກົດກຳນົດໄດ້ຕາມຕ້ອງການແລ້ວ ກົດໃສ່ Generate video